# ທະນາຄານຈຳລອງ-ສະໂມສອນໄດ້ຖືກມອບ-ຮັບຢ່າງເປັນທາງການແລ້ວ





ໂຄງການກໍ່ສ້າງທະນາຄານຈຳລອງ-ສະໂມສອນ-ຫ້ອງການ ແລະ ຫໍສະໝຸດຂອງສະຖາບັນການທະນາຄານໄດ້ສຳເລັດລົງດ້ວຍຄວາມສວຍງາມ ແລະ ໄດ້ມີພິທີມອບ-ຮັບໃນຕອນແລງຂອງວັນທີ 29 ທັນວາ 2011 ລະຫວ່າງຫ້ອງການທະນາຄານແຫ່ງ ສປປ ລາວ ເຈົ້າຂອງໂຄງການ ກັບ ບໍລິສັດກຸ່ມຄຳໄພຊະນະຈຳກັດຜູ້ດຽວ ຜູ້ຮັບເໝົາໂຄງການກໍ່ສ້າງ ໂດຍການເປັນກຽດເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ບັນດາທ່ານຮອງຜູ້ວ່າການ, ຄະນະກົມ-ຄະນະອຳນວຍການທະນາຄານທຸລະກິດ-ສະຖາບັນການທະນາຄານ, ບໍລິສັດຮັບເໝົາ ແລະ ບໍລິສັດສຳຫຼວດອອກແບບເຄຫາ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີມອບ-ຮັບອາຄານດັ່ງກ່າວ ປະທານບໍລິສັດຈິດຕະກອນສຳຫຼວດອອກແບບເຄຫາ ແລະ ທີ່ປຶກສາການກໍ່ສ້າງ ແລະ ທ່ານ ຄຳໄພຊະນະ ປະທານບໍລິສັດກຸ່ມຄຳໄພຊະນະຈຳກັດຜູ້ດຽວກໍໄດ້ຜັດປ່ຽນກັນຢືນຢັນເຖິງຜົນສຳເລັດຂອງໂຄງການກໍ່ສ້າງຕຶກສະໂມສອນ, ທະນາຄານຈຳລອງ, ຫ້ອງການ ແລະ ຫ້ອງສະໝຸດ ເຊິ່ງເປັນອາຄານ 4 ຊັ້ນ, ປະກອບມີ 16 ໜ້າວຽກຄືວຽກອາຄານ, ລະບົບສະກັດກັ້ນ-ຕ້ານອັກຄີໄພ, ລະບົບປັບອາກາດ, ລະບົບສື່ສານ, ລະບົບກ້ອງວົງຈອນປິດ, ວຽກໄຟຟ້ານອກອາຄານ, ວຽກອ່າງເກັບນ້ຳໃຕ້ດິນ, ວຽກລະບົບກັນຟ້າຜ່າອາຄານ, ລະບົບຮ່ອງນ້ຳ, ລະບົບປ້ຳນ້ຳ, ລະບົບເຄື່ອງສຽງ, ວຽກເຟີນີເຈີສະໂມສອນ, ເຟີນີເຈີຫ້ອງການ, ເຟີນີເຈີທະນາຄານຈຳລອງ, ວຽກປ້າຍອາຄານ-ທາງຍ່າງ, ວຽກຕົບແຕ່ງສວນ ແລະ ດອກໄມ້ປະດັບ ນອກນີ້ຍັງໄດ້ດັດແກ້ວຽກເພີ່ມຕື່ມອີກ 8 ໜ້າວຽກໃນມູນຄ່າ 772 ລ້ານກວ່າກີບ ໂດຍບໍລິສັດຄຳໄພຊະນະ ບໍ່ໄດ້ຄິດໄລ່ເຂົ້າໃນແຜນກໍ່ສ້າງຖືວ່າ: ເປັນການປະກອບສ່ວນຊ່ວຍເຫຼືອລ້າແກ່ເຈົ້າຂອງໂຄງການ ແລະ ໂຄງການດັ່ງກ່າວນີ້ແມ່ນນຳໃຊ້ແຫຼ່ງທຶນຂອງທະນາຄານແຫ່ງ ສປປ ລາວ ໃນວົງເງິນກໍ່ສ້າງ 50 ຕື້ກີບ.

ໃນເວລາຕໍ່ມາທ່ານ ຄຳໄພ ຊະນະ ກໍໄດ້ມອບຄອມພິວເຕີໃຫ້ແກ່ສະຖາບັນການທະນາຄານ 10 ຊຸດ ມູນຄ່າ 60 ລ້ານກວ່າກີບ ແລະ ຈາກນັ້ນທ່ານປະທານບໍລິສັດກຸ່ມຄຳໄພຊະນະຈຳກັດຜູ້ດຽວ ກໍໄດ້ກ່າວມອບທະນາຄານຈຳລອງ-ສະໂມສອນ-ຫ້ອງການ ແລະ ຫໍສະໝຸດທີ່ສ້າງສຳເລັດແລ້ວໃຫ້ແກ່ທ່ານ ນາງ ພາສີ ພົມມະກອນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ໃນນາມເຈົ້າຂອງໂຄງການເພື່ອມອບຕໍ່ໃຫ້ແກ່ສະຖາບັນການທະນາຄານເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດໃນການກໍ່ສ້າງຊັບພະຍາກອນມະນຸດຂອງຂະແໜງການທະນາ ຄານໃນຂັ້ນຕໍ່ໄປ.